UNITED NATIONS
LAO PDR

# ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ຜົນຂອງກອງປະຊຸມໂຕະມົນປະຈຳປີ 2022

**16 ມັງກອນ 2024**

**ທີ່ໂຮງແຮມລາວພຣາຊາ, ນະຄອນຫຼວງວຽງຈັນ**

# ຫົວຂໍ້ນໍາສະເໜີ

1. ການຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນປະຈໍາປີ 2022
2. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຜົນຂອງກອງປະຊຸມໂຕະມົນປະຈໍາປີ 2022

# I. ການຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນປະຈຳປີ 2022

- ກະຊວງແຜນການ ແລະ ການລົງທຶນ ໄດ້ລາຍງານຜົນຂອງກອງປະຊຸມໂຕະມົນປະຈຳປີ 2022 ເຖິງລັດຖະບານ ແລະ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໄດ້ອອກແຈ້ງການ ສະບັບເລກທີ 272/ຫສນຍ, ລົງວັນທີ 28 ກຸມພາ 2023: ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍຜົນສຳເລັດກອງປະຊຸມໂຕະມົນ ປະຈຳປີ 2022 ແລະທິດທາງ ປະຈຳປີ 2023.
- ກະຊວງແຜນການ ແລະ ການລົງທຶນ ໄດ້ແຈ້ງໜັງສືສະບັບເລກທີ 1696/ກຜທ, ລົງວັນທີ 10 ກໍລະກົດ 2023 ໃຫ້ກະຊວງຂະແໜງການທີ່ກ່ຽວຂ້ອງເພື່ອຈັດຕັ້ງຜັນຂະຫຍາຍຜົນຂອງ ກອງປະຊຸມໂຕະມົນ ຕາມພາລະບົດບາດຂອງຕົນ.

## II. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຈ້ງການຜັນຂະຫຍາຍຜົນຂອງກອງປະຊຸໂຕະມົນ ປະຈໍາປີ 2022

## 1. ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈໍາປີ 2023

- ໄດ້ແກ້ໄຂບັນຫາເຄັ່ງຮ້ອນດ້ານເສດຖະກິດ-ການເງິນ ຕາມ ຄໍາສັ່ງເລກທີ 19/ກມສພ, ຄໍາສັ່ງເລກທີ 13/ລບ ວ່າດ້ວຍການແກ້ໄຂບັນຫາອັດຕາເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ ສົມທົບກັບການສືບຕໍ່ຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາດ້ານເສດຖະກິດ-ການເງິນ ເຮັດໃຫ້ເສດຖະກິດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ເຊິ່ງໃນປີ 2023 ອັດຕາການເຕີບໂຕເສດຖະກິດ ຄາດວ່າຈະບັນລຸໄດ້ 4,2%.
- ໄດ້ປະຕິບັດຕາມຂໍ້ຕົກລົງ 93/ນຍ ລົງວັນທີ 14 ກໍລະກົດ 2023 ໂດຍສຸມໃສ່ຊຸກຍູ້ ແລະ ສົ່ງເສີມການຜະລິດຕາມທ່າແຮງບົ່ມຊ້ອນຂອງແຕ່ລະທ້ອງຖິ່ນ ເພື່ອທົດແທນການນໍາເຂົ້າ ແລະ ເປັນສິນຄ້າສົ່ງອອກຕ່າງປະເທດ ດ້ວຍການອອກນະໂຍບາຍສິນເຊື່ອດອກເບ້ຍຜ່ອນຜັນ ແລະ ນະໂຍບາຍຖົມຊຸມດອກເບ້ຍ ສໍາລັບສິນຄ້າທີ່ຜະເລີດຢູ່ພາຍໃນ ແລະ ການປຸງແຕ່ງຜະລິດຕະພັນສໍາເລັດຮູບເພື່ອສົ່ງອອກ.
- ໄດ້ປັບປຸງນິຕິກໍາ ແລະ ກົນໄກການຄຸ້ມຄອງການເກັບລາຍຮັບ ໃຫ້ມີປະສິດທິພາບກວ່າເກົ່າ ເປັນຕົ້ນ ໄດ້ຊຸກຍູ້ຫົວໜ່ວຍທຸລະກິດເຂົ້າສູ່ລະບົບອາກອນມູນຄ່າເພີ່ມໄດ້ 70% ຂອງຫົວໜ່ວຍທີ່ມີເງື່ອນໄຂ, ໄດ້ຂະຫຍາຍການຫັນເປັນທັນສະໄໝໃນການຄຸ້ມຄອງລາຍຮັບ ດ້ວຍການນໍາໃຊ້ລະບົບ TaxRis ຢູ່ 148 ເມືອງ ແລະ 6 ເຂດເສດຖະກິດພິເສດ.
- ໄດ້ສໍາເລັດບົດລາຍງານການສະຫຼຸບຕີລາຄາກາງສະໄໝແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ໂດຍມີການປຶກສາຫາລືກັບບັນດາຂະແໜງການ, ທ້ອງຖິ່ນ ແລະຄູ່ຮ່ວມພັດທະນາ ແລະ ໄດ້ຖືກຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃນຕົ້ນເດືອນພະຈິກ 2023 ທີ່ຜ່ານມາ ຕາມມະຕິສະພາສະບັບເລກທີ 118/ສພຊ ລົງວັນທີ 21 ພະຈິກ 2023.

## 2. ຍຸດທະສາດການເງິນ

- ໄດ້ຈັດກອງປະຊຸມລະດັບສູງໃນຫົວຂໍ້: “ການຕິດຕາມ, ຄຸ້ມຄອງ ແລະ ປະສານງານການຈັດຕັ້ງປະຕິບັດ ຍຸດທະສາດການເງິນ” ພາຍໃຕ້ການເປັນປະທານ ຂອງທ່ານລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ແລະ ມີບັນດາ ຮອງລັດຖະມົນຕີ, ບັນດາຫົວໜ້າກົມ, ຮອງຫົວໜ້າກົມເຂົ້າຮ່ວມ. ກອງປະຊຸມເຫັນດີໃຫ້ມີການສ້າງແຜນງານຮ່ວມ (joint programme), ກອງເລຂາຮ່ວມ ແລະ ໄດ້ຕົກລົງບເບື້ອງຕົ້ນກົນໄກການລາຍງານ ລັດຖະບານ, ປະຈຸບັນ ລັດຖະບານລຸກຊຳບວກ ກຳລັງຄົ້ນຄວ້າຈະໃຫ້ການຊ່ວຍເຫຼືອ ການຈັດຕັ້ງປະຕິບັດ ຍຸດທະສາດການເງິນ ໂດຍສຸມໃສ່ 8 ໃນ 54 action ທີ່ຕິດພັນກັບ ການເງິນສີຂຽວ.

## 3. ຂອບການຟື້ນຟູເສດຖະກິດຂອງ ສປປ ລາວ

- ໄດ້ມີການຮ່ວມເຮັດວຽກກັບບັນດາຂະແໜງການໃນການເຊື່ອມສານວຽກງານດັ່ງກ່າວໃນທັງ 5 ວຽກຈຸດສຸມໃຫຍ່ເຂົ້າໃນການຈັດຕັ້ງປະຕິບັດວຽກງານແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ລະບຸໃນວາລະແຫ່ງຊາດ, ເຊື່ອມສານໃນໜ້າວຽກຂອງການຈັດຕັ້ງປະຕິບັດຍຸດທະສາດທາງການເງິນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດການຂ້າມຜ່ານອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງໂລ່ງລຽນ ເຊິ່ງໜ້າວຽກຕົວຈິງແມ່ນໄດ້ມີໃນແຜນປະຕິບັດງານ ຂອງແຕ່ລະຂະແໜງການກ່ຽວຂ້ອງ ໂດຍໄດ້ລະບຸລະອຽດໃນເອກະສານຂອບຟື້ນຟູເສດຖະກິດແລ້ວ.

## 4. ການຮ່ວມມືເພື່ອການພັດທະນາ ທີ່ມີປະສິດທິຜົນ

- ໄດ້ປັບປຸງລະບົບຖານຂໍ້ມູນຄຸ້ມຄອງແຜນງານໂຄງການ ຊກພ (ODA-MIS) ແລະໄດ້ເຊື່ອມສານລະບົບຖານຂໍ້ມູນດັ່ງກ່າວເຂົ້າກັບລະບົບຂອງກະຊວງຂະແໜງການຈຳນວນໜຶ່ງ.
- ກົມຮ່ວມມືສາກົນ ໃນນາມກອງເລຂາຂະບວນການໂຕະມົນ ໄດ້ເຮັດແບບສອບຖາມອອນໄລຍ (e-survey) ເພື່ອຮັບຟັງຄຳຄິດເຫັນ ແລະຂໍ້ສະເໜີຕ່າງໆໃນການປັບປຸງກົນໄກຂະບວນການໂຕະມົນ ລວມທັງການຈັດຕັ້ງປະຕິບັດວຽກງານຂອງກອງເລຂາ 10 ໜ່ວຍງານຂະແໜງການ. ນອກຈາກນີ້ ໄດ້ຮ່າງຄຳແນະນຳກ່ຽວກັບວຽກງານຂະບວນການໂຕະມົນ ແລະ ກອບໜ້າວຽກຂອງຂອງໜ່ວຍງານຂະແໜງການ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.
- ໄດ້ເອົາເຂົ້າໃນແຜນວຽກຂອງກົມຮ່ວມມືສາກົນປະຈຳປີ 2024 ກ່ຽວກັບການຈັດກອງປະຊຸມປະຈຳໄຕມາດ ແລະປະຈຳປີ ເພື່ອຫັດແໜ້ນກົນໄກປະສານງານ, ແລກປ່ຽນຂໍ້ມູນຂ່າວສານ ແລະ ການລາຍງານຂອງໜ່ວຍງານຂະແໜງການ ເພື່ອເປັນຂໍ້ມູນຮັບໃຊ້ກອງປະຊຸມໂຕະມົນແຕ່ລະຄັ້ງ.
- ຂຶ້ນແຜນທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນດຳເນີນງານຖະແຫຼງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາ ທີ່ມີປະສິດທິຜົນ ໂດຍສົມທົບກັບ 10 ໜ່ວຍງານຂະແໜງການ.
- ໄດ້ດຳເນີນການສຳຫຼວດການເປັນຄູ່ຮ່ວມ ເພື່ອການພັດທະນາທີ່ມີປະສິດທິຜົນຂອງສາກົນ ຄັ້ງທີ4 ໂດຍການເຂົ້າຂອງທຸກພາກສ່ວນທີ່ກ່ຽວຂ້ອງໃນການ ຕິດຕາມ ແລະ ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດ 8 ຫຼັກການ ຂອງຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ, ໂດຍສະເພາະ ລັດຖະບານ, ຄູ່ຮ່ວມພັດທະນາ, ພາກເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະພາກສ່ວນອື່ນໆ ຢ່າງປົກກະຕິ ແລະຄົບຖ້ວນ;

## 5. ຍຸດທະສາດຂ້າມຜ່ານອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງໂລ່ງລ່ຽນ

- ລັດຖະບານໄດ້ອອກດຳລັດສະບັບເລກທີ 386/ນຍ, ລົງວັນທີ 25 ທັນວາ 2023 ວ່າດ້ວຍການຮັບຮອງ ແລະປະກາດໃຊ້ ແຜນຍຸດທະສາດການຂ້າມຜ່ານອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງໂລ່ງລ່ຽນຂອງ ສປປ ລາວ (2022-2026 ແລະວິໄສທັດຮອດ ປີ 2030).

## 6. ການປະຕິຮູບການຄຸ້ມຄອງການເງິນພາກລັດ

- ປັບປຸງລະບົບຄຸ້ມຄອງລາຍຮັບພາສີ ໂດຍຜ່ານລະບົບແຈ້ງພາສີເປັນທັນສະໄໝ (ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ອາຊີກູດາ ພລາສ), ນຳໃຊ້ລະບົບ Smart Tax, ປັບປຸງລະບົບຈັດເກັບຄ່າທຳນຽມ ແລະ ຄ່າບໍລິການ ຢູ່ດ່ານສາກົນ (Easy Pass).
- ປັບປຸງລະບົບຄຸ້ມຄອງລາຍຮັບສ່ວຍສາອາກອນ ໂດຍການປັບປຸງ ແລະ ພັດທະນາລະບົບຄຸ້ມຄອງຈັດເກັບພາສີທີ່ດິນໃໝ່, ລະບົບການຈັດເກັບຄ່າທຳນຽມທາງ, ລະບົບຄຸ້ມຄອງຊັບສິນຂອງລັດ, ລະບົບຊຳລະອາກອນຜ່ານລະບົບມືຖື, ພັດທະນາສູນສະແດງຜົນ ແລະ ຄຸ້ມຄອງ, ຕິດຕາມລະບົບຄຸ້ມຄອງວຽກງານສ່ວຍສາອາກອນທັນສະໄໝ TaxRIS.

## 7. ວຽກງານຊັບພະຍາກອນມະນຸດໃນຂະແໜງສຶກສາ

- ລັດຖະບານໄດ້ອອກມະຕິຕົກລົງເລກທີ 09/ລບ, ລົງວັນທີ 17 ກໍລະກົດ 2023 ກ່ຽວກັບນະໂຍບາຍ ແລະ ມາດຕະການແກ້ໄຂບັນຫາການຂາດແຄນຄູສອນ, ການປະລະການຮຽນ ແລະ ການສົ່ງເສີມເຂົ້າຮຽນວິຊາຊີບ, ດຳລັດສະບັບເລກທີ 202/ລບ, ລົງວັນທີ 12 ພຶດສະພາ 2023 ວ່າດ້ວຍລັດຖະກອນຄູ ແນໃສ່ຮັບປະກັນການປະຕິບັດໜ້າທີ່ໃນການສ້າງຊັບພະຍາກອນມະນຸດ ແລະ ການພັດທະນາຄູ ແລະດຳລັດສະບັບເລກທີ194/ລບ, ລົງວັນທີ 19 ເມສາ 2023 ວ່າດ້ວຍກອງທຶນພັດທະນາການຝຶກອົບຮົມ ແລະ ການສຶກສາ ແລະ ວິຊາຊີບ.
- ໄດ້ຊຸກຍູ້ໃຫ້ຄະນະກຳມະການແຜນການ ແລະງົບປະມານ (PBC) ແລະ ຄະນະກຳມະການຈັດສັນຄູ (TAC) ມີການປຶກສາຫາລືເປັນປະຈຳ ແລະ ລາຍງານໜ່ວຍງານຂະແໜງການສຶກສາ.
- ໄດ້ປັບປຸງຫຼັກສູດການຮຽນ-ການສອນແບບໃໝ່ ໂດຍກົມສ້າງຄູ (DTE) ໄດ້ຈັດຝຶກອົບຮົມຄູຢູ່ສູນກາງ ແລະ ທ້ອງຖິ່ນ.

# 8. ວຽກງານສາທາລະນະສຸກ

- ຂະຫຍາຍຕາໜ່າງສາທາລະນະສຸກໄປສູ່ເຂດຊົນນະບົດຫ່າງໄກສອກຫຼີກຢ່າງມີຈຸດສຸມ,ບັນຈຸຊັບຊ້ອນພະນັກງານ-ຈັດສັນແຫຼ່ງຊັບພະຍາກອນທີ່ຈໍາເປັນ; ເອົາໃຈໃສ່ວຽກງານສົ່ງເສີມສຸຂະພາບ; ສ້າງຄວາມເຂັ້ມແຂງລະບົບເຝົ້າລະວັງ ແລະ ໂຕ້ຕອບການລະບາດຂອງພະຍາດໂຄວິດ-19 ແລະ ບັນດາພະຍາດຕາມລະດູການຕ່າງໆໃຫ້ທັນສະພາບການ, ປັບປຸງການສະໜອງການບໍລິການປິ່ນປົວດ້ວຍກອງທຶນປະກັນສຸຂະພາບ, ປະກັນສັງຄົມ; ສໍາເລັດຍຸດທະສາດພັດທະນາຊັບພະຍາກອນມະນຸດສາທາລະນະສຸກ ຮອດປີ 2030;
- ສຸມໃສ່ການບັນລຸຄາດໝາຍ 11 ຕົວຊີ້ບອກທີ່ສະພາແຫ່ງຊາດໄດ້ຮັບຮອງ ລວມທັງຄາດໝາຍ SDG ໃນປີ 2030 ດ້ວຍການປະສານສົມທົບບັນດາຂະແໜງການທີ່ກ່ຽວຂ້ອງທັງຢູ່ສູນກາງ ແລະ ທ້ອງຖິ່ນ, ບັນດາປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆ ເພື່ອລະດົມທຶນຮອນ, ເຕັກນິກວິຊາການເຂົ້າໃນການຈັດຕັ້ງປະຕິບັດວຽກງານບູລິມະສິດຂອງຂະແໜງການສາທາລະນະສຸກ, ໃນປີ 2023 ມີ 08 ຕົວຊີ້ບອກທີ່ສາມາດບັນລຸຄາດໝາຍໄດ້ ແລະ 03 ຕົວຊີ້ບອກ ມີທ່າອ່ຽງຈະບໍ່ສາມາດບັນລຸຄາດໝາຍໄດ້ຄື: ອັດຕາການເກີດລູກມີແພດຊ່ວຍ, ອັດຕາການໃຫ້ວັກຊີນກັນພະຍາດ Penta 3 ແລະ ອັດຕາການປົກຄຸມປະກັນສຸຂະພາບທົ່ວປວງຊົນ;
- ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ (ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ສະພາແຫ່ງຊາດ) ໂດຍຜ່ານກອງປະຊຸມປຶກສາຫາລືລະດັບຕ່າງໆຫຼາຍຄັ້ງ, ໃນປີ 2023 ກະຊວງການເງິນ ໄດ້ອະນຸມັດງົບປະມານເພີ່ມ 50 ຕື້ ໃສ່ບ້ວງປະກັນສຸຂະພາບທີ່ໄດ້ຮັບປົກກະຕິ 180 ຕື້ກີບ; ໄດ້ສ້າງກົດໝາຍສາທາລະນະສຸກ ຂຶ້ນໃໝ່, ປັບປຸງກົດໝາຍວ່າດ້ວຍການປະກັນສຸຂະພາບ; ໄດ້ມີການຄົ້ນຄ້ວາກ່ຽວກັບພາສີສຸຂະພາບຮ່ວມຄະນະກໍາມະການເພື່ອນໍາໃຊ້ລາຍຮັບຈາກກອງທຶນຄວບຄຸມຢາສູບເຂົ້າໃນງົບປະມານຂະແໜງສາທາລະນະສຸກ.

## 9. ວຽກງານຍົກລະດັບສີມືແຮງງານ ແລະ ການເຂົ້າເຖິງການມີວຽກເຮັດງານທຳ

- ໄດ້ລະດົມຂົນຂວາຍການສະໜັບສະໜູນທຶນການສຶກສາ ລະດັບວິຊາຊີບຈາກຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ, ສະຖາບັນການສຶກສາ ແລະ ພາກສ່ວນອື່ນໆທົ່ວສັງຄົມ ເພື່ອຍົກລະດັບຂີດຄວາມສາມາດໃຫ້ແກ່ຊັບພະຍາກອນມະນຸດ ລວມມີທັງໝົດ 8 ໂຄງການ ລວມມູນຄ່າ 25.343.015 ໂດລາສະຫະລັດ.
- ໄດ້ສ້າງການເອື້ອອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງການມີວຽກເຮັດງານທຳ ໂດຍການຂະຫຍາຍຈຸດບໍລິການຈັດຫາງານ ຂັ້ນເມືອງ ໄດ້ 29 ເມືອງ ໃນ 6 ແຂວງ; ສົ່ງເສີມທຸກຫົວໜ່ວຍເສດຖະກິດ ທັງພາກລັດ, ວິສາຫະກິດ, ເຂດເສດຖະກິດພິເສດ ແລະ ໂຄງການລົງທຶນຕ່າງໆ ຈັດຫາວຽກເຮັດງານທຳໃຫ້ເຂົ້າສູ່ຕະຫຼາດແຮງງານ ພາຍໃນ ແລະ ຕ່າງປະເທດ ຕິດພັນກັບວາລະແຫ່ງຊາດ ໄດ້ 150.469 ຄົນ, ຍິງ 80.203 ຄົນ, ລື່ນແຜນການ 92,41 % ຂອງແຜນການປີ (78.200 ຄົນ).
- ລັດຖະບານໄດ້ຮັບຮອງ ແລະ ປະກາດໃຊ້ກົດໝາຍວ່າດ້ວຍການຈັດຫາງານ ຕາມລັດຖະດຳລັດ ຂອງປະທານປະເທດ ສະບັບເລກທີ 093/ປປທ, ລົງວັນທີ 30 ສິງຫາ 2023; ສຳເລັດໂດຍພື້ນຖານຮ່າງກົດໝາຍວ່າດ້ວຍການພັດທະນາສີມືແຮງງານ, ອື່ນໆ.
- ໄດ້ພັດທະນາສີມືແຮງງານ ຕິດພັນກັບວາລະແຫ່ງຊາດ ໃຫ້ຜູ້ບໍ່ມີອາຊີບ, ຜູ້ຕ້ອງການປ່ຽນອາຊີບ,ຜູ້ວ່າງງານ ແລະ ຜູ້ອອກແຮງງານທີ່ຈະເຂົ້າສູ່ຕຳແໜ່ງງານໃໝ່ ໄດ້ທັງໝົດ 10.783 ຄົນ, ຍິງ 4.371 ຄົນ, ລື່ນແຜນການປີ 34,79% (ແຜນການ 8.000 ຄົນ); ເຮັດການທົດສອບສີມືແຮງງານຕາມມາດຕະຖານສີມືແຮງງານແຫ່ງຊາດ 32 ສາຂາອາຊີບ ແລະ ຊຸກຍູ້ຫົວຫົວໜ່ວຍແຮງງານເຮັດການທົດສອບ ສາຂາອາຊີບຕ່າງໆ ໄດ້ 472 ຄົນ, ຍິງ 361 ຄົນ ເທົ່າກັບ 63,78% ຂອງແຜນການ (740 ຄົນ).

## 10. ວຽກງານທ່ອງທ່ຽວ ແລະວັດທະນະທຳ

- ໄດ້ເພີ່ມທະວີການທ່ອງທ່ຽວດ້ານລະບົບນິເວດທາງທຳມະຊາດ ແລະວັດທະນະທຳອັນດີງາມ ເພື່ອດຶງດູດນັກທ່ອງທ່ຽວ ໃຫ້ເຂົ້າມາທ່ອງທ່ຽວໃນ ສປປ ລາວ ຫຼາຍຂຶ້ນ, ດົນຂຶ້ນ ແລະໃຊ້ຈ່າຍສູງຂຶ້ນ ແລະ ໃນປີນີ້ເອງໄດ້ເປີດປີທ່ອງທ່ຽວລາວ.

- ໄດ້ສ້າງສິ່ງອຳນວຍຄວາມສະດວກ, ເງື່ອນໄຂ, ລະບຽບ, ການໂຄສະນາເຜີຍແຜ່ ແລະສະຖານທີ່ທ່ອງທ່ຽວໃໝ່ໆໃຫ້ເພີ່ມຂຶ້ນ ເພື່ອຈູງໃຈໃຫ້ນັກທ່ອງທ່ຽວເພີ່ມຂຶ້ນ.

## 11. ວຽກງານການປົກຄອງທີ່ດີ

- ປັບປຸງສະພາບແວດລ້ອມ ໃນການເຂົ້າເຖິງຂອງປະຊາຊົນ. ເຊັ່ນ ການຫຼຸດເວລາສະເລ່ຍໃນການລົງທະບຽນ NPAs ໄດ້ປັບປຸງຈາກ 595 ວັນ (2018) ເປັນ 151 ວັນເຮັດວຽກ (2022/2023). ກະຊວງພາຍໃນ ໄດ້ຮັບຮອງເອົາການປັບປຸງຂອບການຄຸ້ມຄອງ CSO ເປັນໜຶ່ງໃນບຸລິມະສິດຂອງຂະແໜງການປົກຄອງ.
- ປັບປຸງການເຂົ້າເຖິງຂໍ້ມູນທາງດ້ານກົດໝາຍ: ຖານຂໍ້ມູນທາງດ້ານກົດໝາຍໄດ້ຮັບການຍົກລະດັບຂຶ້ນ ແລະ ເຊື່ອມສານເຂົ້າກັບເວັບໄຊ໌ຂອງກະຊວງ.
- ເຜີຍແຜ່ຄຳແນະນຳ 77/ນຍ, ລົງວັນທີ 02 ມີນາ 2023 ກ່ຽວກັບການຄຸ້ມຄອງງົບປະມານໃນຂັ້ນທ້ອງຖິ່ນ.
- ສ້າງຄູ່ມືກ່ຽວກັບການສື່ສານໂຄສະນາ ແລະ ບົດແນະນຳກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.
- ເລີ່ມນຳໃຊ້ຂັ້ນຕອນການບໍລິການພື້ນຖານ ກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

# 12. ໜ່ວຍງານຂະແໜງການຄ້າ ແລະ ພາກເອກະຊົນ

- **ປັບປຸງສະພາບແວດລ້ອມ ສຳລັບການດຳເນີນທຸລະກິດ**

➢ ປັບປຸງຂັ້ນຕອນສຳລັບການສ້າງທຸລະກິດ
  - ໄດ້ດັດແກ້ກົດໝາຍວ່າດ້ວຍວິສາຫະກິດ ແລະ ປະຕິຮູບຂະບວນການສຳລັບການສ້າງທຸລະກິດ ເຮັດໃຫ້ສາມາດຫຼຸດໄລຍະເວລາໂດຍສະເລ່ຍ ສຳລັບການສ້າງທຸລະກິດຫຼຸດລົງຈາກ 173 ວັນໃນປີ 2020 ເປັນ 30ວັນ ໃນປີ 2022;
  - ການພັດທະນາລະບົບລົງທະບຽນຫົວໜ່ວຍທຸລະກິດແບບອອນລາຍ ມີຄວາມຄືບໜ້າດີ ແລະ ຄາດວ່າຈະສາມາດເປີດນຳໃຊ້ໄດ້ໃນເດືອນ ກໍລະກົດ 2024;
  - ໄດ້ມີການປັບປຸງ ໃບອະນຍາດດຳເນີນກິດຈະການ ສຳລັບ 14 ຂະແໜງ, ແລະ ມີແຜນທີ່ຈະປັບປຸງໃບອະນຸຍາດດຳເນີນກິດຈະການ ເພີ່ມຕື່ມສຳລັບ 06 ຂະແໜງກ່ອນທ້າຍປີ 2024;
  - ມີຄວາມຄືບໜ້າ ໃນການຫຼຸດຈຳນວນກິດຈະກຳ ທີ່ຕ້ອງໄດ້ຮັບໃບອະນຸຍາດລົງທຶນ.

➢ ປັບປຸງຍົກລະດັບເວບໄຊ Lao Trade Portal, ປະກາດນຳໃຊ້ລະບົບຈັດລຽງ IP, Lao Law Mobile Application ແລະ Lao Licensing Portal ເພື່ອປັບປຸງການເຂົ້າເຖິງຂໍ້ມູນ ແລະ ກົດລະບຽບສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ.

- **ຍົກລະດັບຄວາມສາມາດໃນການແຂ່ງຂັນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ**

➢ ໄດ້ໃຫ້ການສະໜັບສະໜູນ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຈຳນວນ 200 ຫົວໜ່ວຍ ໃນການເຂົ້າເຖິງແຫຼ່ງທຶນທີ່ຍືນຍົງ;

➢ ໄດ້ໃຫ້ການສະໜັບສະໜູນດ້ານວິຊາການ ໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງຈຳນວນຫຼາຍກ່ວາ 1000 ຫົວໜ່ວຍ ໃນດ້ານການວາງແຜນທຸລະກິດ, ການສ້າງຍຸດທະສາດ, ຍົກລະດັບມາດຖານ, ການຕະຫຼາດ ແລະ ອື່ນໆ;

➢ ໄດ້ພັດທະນາລະບົບຝຶກອົບຮົມແບບອອນລາຍ ສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ;

➢ ໄດ້ພັດທະນາແບບວຽກສຳລັບການສົ່ງອອກສິນຄ້າ ສຳລັບຂະແໜງກາເຟ ແລະ ໄມ້ແປຮູບ;

➢ ໄດ້ພັດທະນາຄຳແນະນຳ ເພື່ອອຳນວຍຄວາມສະດວກໃຫ້ແກ່ການສົ່ງອອກສິນຄ້າ ໄປສູ່ສະຫະພາບເອີຣົບ ພາຍໃຕ້ຂອບການແລກປ່ຽນສິນຄ້າທຸກຊະນິດ ຍົກເວັ້ນອາວຸດ.

- **ປັບປຸງນະໂຍບາຍການຄ້າ ແລະ ການອຳນວຍຄວາມສະດວກໃຫ້ແກ່ການຄ້າ**

➢ ໄດ້ພັດທະນາລະບົບ E-Stat ເພື່ອສັງລວມຕົວເລກສະຖິຕິ;

➢ ໄດ້ສົ່ງເສີມການນຳໃຊ້ກົນໄກປະເມີນຄວາມສ່ຽງ ແລະ ຂະບວນການນຳເຂົ້າ/ສົ່ງອອກ ແບບບໍ່ນຳໃຊ້ເຈ້ຍ:

➢ ໄດ້ຮັບຮອງເອົາຄູ່ມືແນະນຳການຄຸ້ມຄອງຄວາມສ່ຽງ;

➢ ໄດ້ສົ່ງຂໍ້ມູນຄວາມສ່ຽງ ເຂົ້າໃນລະບົບ ASYCUDA, ຫຼຸດອັດຕາການເລືອກຊ່ອງສີແດງ ຈາກ 80% ເປັນຕໍ່າກ່ວາ 60%;

➢ ໄດ້ພັດທະນາ ແລະ ສົ່ງຂໍ້ມູນຄວາມສ່ຽງ ສຳລັບສິນຄ້າປະເພດອາຫານ, ຢາ, ພືດ ແລະ ສັດ;

➢ ສຳເລັດການໂຮມເອົາຄະນະກຳມະການອຳນວຍຄວາມສະດວກດ້ານການຄ້າແຫ່ງຊາດ ແລະ ຄະນະກຳມະການຂົນສົ່ງ ເຂົ້າເປັນຄະນະກຳມະການດຽວ;

➢ ການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກດ້ານການຄ້າ ພາຍໃຕ້ອົງການການຄ້າໂລກ ມີຄວາມຄືບໜ້າດີ.

## 13. ວຽກງານກະສິກຳ

- ໄດ້ກຳນົດມາດຕະການລວມ ເພື່ອແກ້ໄຂຜົນກະທົບຂອງການແຜ່ລະບາດພະຍາດໂຄວິດ-19 ໂດຍສະເພາະການສົ່ງເສີມການຜະລິດກະສິກຳເພື່ອຄ້ຳປະກັນສະບຽງອາຫານ ແລະ ເປັນສິນຄ້າ ໂດຍແນໃສ່ປະລິມານ ແລະຄຸນນະພາບ ຂອງຜົນຜະລິດ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ການຊົມໃຊ້ຂອງຕະຫຼາດພາຍໃນ ແລະພາຍນອກເປັນສິນຄ້າ.
- ໄດ້ເອົາໃຈໃສ່ເພີ່ມທະວີ ການສ້າງຄວາມອາດສາມາດໃຫ້ແກ່ພະນັກງານລັດຖະກອນໃນຂົງເຂດກະສິກຳ ໃນການນຳພາດ້ານວິຊາການ ປູກຝັງ-ລ້ຽງສັດ, ຊາວກະສິ ກອນ ແລະສົ່ງເສີມການເຂົ້າເຖິງພື້ນຖານໂຄງລ່າງສາທາລະນະ ແລະ ຊັບພະຍາກອນທຳມະຊາດຈຳນວນໜຶ່ງ ເພື່ອຮັບປະກັນຊີວິດການເປັນຢູ່ຂອງປະຊາຊົນ.

## 14. ວຽກງານແກ້ໄຂບັນຫາຢາເສບຕິດ

- ໄດ້ປັບປຸງກົດໝາຍ ແລະ ນິຕິກຳຈຳນວນໜຶ່ງ ເພື່ອຮັບໃຊ້ໃນການຄຸ້ມຄອງເສດຖະກິດ-ສັງຄົມ, ໄປຄຽງຄູ່ກັບພະຍາຍາມແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນໃນສັງຄົມໃຫ້ຫຼຸດລົງ ອັນພົ້ນເດັ່ນແມ່ນ ການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ.

## 15. ວຽກງານຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ

- ສຳເລັດກົນໄກການປັບປຸງຂັ້ນຕອນພິຈາລະນາ ອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ໂດຍອີງຕາມ ດຳລັດ ເລກທີ 389/ນຍ, ໄດ້ຫຼຸດຂັ້ນຕອນ ແລະ ໄລຍະເວລາ ໃນການພິຈາລະນາ ການປະເມີນຜົນກະທົບສິ່ງແວດລ້ອມຂອງໂຄງການລົງທຶນ.
- ສຳເລັດການລົງຊຸກຍູ້ ແລະ ສ້າງຄວາມເຂັ້ມແຂງ, ຕິດຕາມກວດກາ ວຽກງານຄຸ້ມຄອງສິ່ງແວດລ້ອມໂຄງການລົງທຶນ ແລະ ແກ້ໄຂເຫດການສຸກເສີນດ້ານສິ່ງແວດລ້ອມ ຮ່ວມກັບຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ ແລະ ເມືອງ ທັງໝົດ ຈຳນວນ 52 ໂຄງການ.
- ໄດ້ຊຸກຍູ້ຜູ້ພັດທະນາໂຄງການໃຫ້ເຂັ້ມງວດໃນການປະຕິບັດພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ ຕາມເງື່ອນໄຂທີ່ກຳນົດໄວ້ໃນໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ດ້ວຍຮູບການອອກໜັງສືແຈ້ງການ, ແຈ້ງທວງ ແລະ ຈັດກອງປະຊຸມ ຊຶ່ງສາມາດຊຸກຍູ້ໄດ້ 178 ໂຄງການ.
- ໄດ້ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ຫຼາຍສະບັບເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງທີ່ດິນ.
- ໄດ້ຄົ້ນຄ້ວາ ແລະ ຜັນຂະຫຍາຍກົດໝາຍ ວ່າດ້ວຍທີ່ດິນ ໂດຍສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ.

# Thank you for your attention